## II. ສະພາບການຊື້-ຂາຍຮຸ້ນ ປະຈຳວັນທີ 16 -22 ທັນວາ 2016

### 1. ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບຕ່າງປະເທດ

ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດ ທຽບໃສ່ອາທິດທີ່ຜ່ານມາ ມີລາຍລະອຽດ ດັ່ງລຸ່ມນີ້:

**ດັດຊະນີຕະຫຼາດຫຼັກຊັບໃນ ສ.ອາເມລິກາ** ດັດຊະນີ S&P500 ປັບຕົວເພີ່ມຂຶ້ນ 0,53%, Dow Jones 0,75% ແລະ NASDAQ 0,64%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນ ສ.ອາເມລິກາ ປັບຕົວເພີ່ມຂຶ້ນຕໍ່ເນື່ອງແມ່ນມາຈາກ ກະຊວງແຮງງານ ສ.ອາເມລິກາ ປະກາດລ່າສຸດວ່າ ຈຳນວນຜູ້ຂໍສະຫວັດດີການວ່າງງານລ່າສຸດປັບຕົວຫຼຸດລົງ 4.000 ຄົນ ໃນອາທິດກ່ອນ ເຊິ່ງສົ່ງຜົນໃຫ້ຈຳນວນຜູ້ຂໍສະຫວັດດີການວ່າງງານ ເຫຼືອພຽງ 254.000 ຄົນ ເຊິ່ງຕ່ຳກວ່າທີ່ນັກວິເຄາະຄາດການໄວ້ທີ່ 255.000 ຄົນ ໂດຍການອອກລາຍງານດັ່ງກ່າວຂອງກະຊວງແຮງງານ ແມ່ນສອດຄ່ອງກັບການກ່າວປາໄສຂອງທ່ານ ເຈເນັດ ເຢເລັນ ຜູ້ອຳນວຍການ ທະນາຄານກາງ ສ.ອາເມລິກາ ຫຼື FED ທີ່ລະບຸວ່າ ປະຈຸບັນ ພາກແຮງງານ ແລະ ການຈ້າງງານພາຍໃນປະເທດ ແມ່ນມີຄວາມເຂັ້ມແຂງທີ່ສຸດໃນຮອບເກືອບ 10 ປີ ໃນຂະນະທີ່ ສະມາຄົມຜູ້ສ້າງເຮືອນ ຫຼື NAHB ຂອງ ສ.ອາເມລິກາ ກໍ່ໄດ້ລາຍງານວ່າ ດັດຊະນີຄວາມເຊື່ອໝັ້ນຂອງຜູ້ສ້າງເຮືອນ ປັບຕົວເພີ່ມຂຶ້ນ 7 ຈຸດ ມາຢູ່ທີ່ 70 ຈຸດໃນເດືອນ ທັນວາ ເຊິ່ງເປັນລະດັບສູງສຸດນັບຕັ້ງແຕ່ເດືອນ ກໍລະກົດ ປີ 2005 ປະກອບກັບ ການທີ່ ທະນາຄານກາງຍີ່ປຸ່ນ ຫຼື BOJ ມີມະຕິຮັກສານະໂຍບາຍການເງິນ ເຊິ່ງລວມໄປເຖິງນະໂຍບາຍດອກເບ້ຍ ຕິດລົບທີ່ -0,1% ໄດ້ສົ່ງຜົນໃຫ້ຮຸ້ນກຸ່ມສະຖາບັນການເງິນ-ທະນາຄານໃນ ສ.ອາເມລິກາ ຂານຮັບ ແລະ ປັບຕົວຂຶ້ນຕາມນຳ ຈາກບັນດາປັດໃຈດັ່ງທີ່ກ່າວມານີ້ ສົ່ງຜົນໃຫ້ດັດຊະນີຕະຫຼາດຫຼັກຊັບ ສ.ອາເມລິກາ ປັບຕົວເພີ່ມຂຶ້ນ ເມື່ອທຽບກັບອາທິດທີ່ຜ່ານມາ.

**ດັດຊະນີຕະຫຼາດຫຼັກຊັບໃນເອີຣົບ** ດັດຊະນີ ຕະຫຼາດຫຼັກຊັບ ຝຣັ່ງ (CAC40) ປັບຕົວເພີ່ມຂຶ້ນ 1,35%, ດັດຊະນີຕະຫຼາດຫຼັກຊັບ ເອີຣົບ (Eurofirst 300) 1,40%, ເຢຍລະມັນ (DAX) 1,99% ແລະ ອັງກິດ (FTSE100) 1,33% ຍົກເວັ້ນດັດຊະນີ ຕະຫຼາດຫຼັກຊັບ ລຸກຊໍາບວກ (LUXXX) ປັບຕົວຫຼຸດລົງ -0,87% . ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນເອີຣົບສ່ວນໃຫຍ່ຍັງຄົງສືບຕໍ່ ປັບຕົວເພີ່ມຂຶ້ນ ແມ່ນເນື່ອງຈາກ ທະນາຄານກາງ ປະເທດ ອັງກິດ ຫຼື BOE ປະກາດ ຮັກສາອັດຕາດອກເບ້ຍທີ່ລະດັບ 0,25% ເຊິ່ງເປັນລະດັບຕ່ຳສຸດເປັນປະຫວັດການ ພ້ອມທັງປະກາດຮັກສານະໂຍບາຍໂຄງການຊື້ພັນທະບັດລັດຖະບານຕາມມາດຕະການຜ່ອນຄາຍທາງປະລິມານ ຫຼື QE ດ້ວຍມູນຄ່າ 4,35 ຕື້ປອນ ໃນການປະຊຸມຄັ້ງລ່າສຸດເພື່ອກະຕຸ້ນເສດຖະກິດຂອງປະເທດ ໃນຂະນະທີ່ ສະຖາບັນວິໄຈເສດຖະກິດຂອງປະເທດເຢຍລະມັນ ຫຼື Ifo ໄດ້ປັບຄາດການການຂະຫຍາຍຕົວຂອງ GDP ປະເທດ ໃນປີ 2017 ຂຶ້ນມາຢູ່ທີ່ລະດັບ 1,5% ຈາກເດີມທີ່ກຳນົດໄວ້ທີ່ 1,4% ຈາກທ່າອ່ຽງຄວາມເຂັ້ມແຂງຂອງເສດຖະກິດປະເທດໃນໄຕມາດ 4 ແລະ ດັດຊະນີຄວາມເຊື່ອໝັ້ນພາກທຸລະກິດຂອງປະເທດ ກໍ່ປັບຕົວເພີ່ມຂຶ້ນຈາກ 110,4 ໃນເດືອນ ພະຈິກ ຂຶ້ນເປັນ 111 ໃນເດືອນທັນວາ ເຊັ່ນດຽວກັນກັບ ປະເທດ ຝຣັ່ງ ໂດຍສຳນັກງານສະຖິຕິແຫ່ງຊາດ ຂອງ ປະເທດ ຝຣັ່ງ ຫຼື Insee ກໍ່ໄດ້ອອກມາຄາດການວ່າ ເສດຖະກິດຂອງປະເທດຝຣັ່ງຈະມີການຂະຫຍາຍຕົວທີ່ 1,2% ໃນປີນີ້ ຫຼັງຈາກ ເສດຖະກິດຂອງປະເທດໃນໄຕມາດ 4 ມີແນວໂນ້ມທີ່ຈະຂະຫຍາຍເຖິງ 0,4% ໂດຍຈາກບັນດາປັດໃຈດັ່ງທີ່ກ່າວມານີ້ ໄດ້ສົ່ງຜົນໃຫ້ດັດຊະນີຕະຫຼາດຫຼັກຊັບ ໃນເອີຣົບມີການປັບຕົວເພີ່ມຂຶ້ນເປັນສ່ວນໃຫຍ່ເມື່ອທຽບກັບອາທິດທີ່ຜ່ານມາ.

**ດັດຊະນີຕະຫຼາດຫຼັກຊັບໃນອາຊີ**: ດັດຊະນີ ຕະຫຼາດຫຼັກຊັບ ຍີ່ປຸ່ນ (NIKKEI225) ປັບຕົວເພີ່ມຂຶ້ນ 0,99%, ສສ. ຫວຽດນາມ (HOCHIMIN) 0,27%, ສ.ເກົາຫຼີ (KOSPI) 0,05%, ແລະ ອົດສະຕາລີ (S&P/ASX200) 0,52%. ຍົກເວັ້ນດັດຊະນີ ສປ.ຈີນ (SHANGHAI) ປັບຕົວຫຼຸດລົງ -0,10%, ສປ.ຈີນ (SHENZHEN) 1,85%, ມຽນມ້າ (MYANPIX) -0,45%, ສສ. ຫວຽດນາມ (HANOI) 2,14%, ອິນໂດເນເຊຍ (JCI) -2,88%, ຮ່ອງກົງ (HANGSHENG) -2,88%, ສິງກະໂປ (STRAIT TIMES) -1,77% ມາເລເຊຍ (FBMLCI) -0,83%, ໄຕ້ຫວັນ (TWSE) -1,75%, ໄທ (SET) -0,83 %, ຟີລິບປິນ (PCOMP) -3,49%, ອາຊຽນ 40 (ASEAN 40) -2,76% ແລະ ກຳປູເຈຍ (CSX) 5,31% ສາເຫດທີ່ເຮັດໃຫ້ດັດຊະນີຕະຫຼາດຫຼັກຊັບໃນອາຊີສ່ວນໃຫຍ່ປັບຕົວຫຼຸດລົງແມ່ນເນື່ອງຈາກ ການປະກາດປັບຂຶ້ນອັດຕາດອກເບ້ຍຂອງ ທະນາຄານກາງ

ສ.ອາເມລິກາ ຫຼື FED ໄດ້ສ້າງແຮງກົດດັນໃຫ້ກັບຕະຫຼາດຫຼັກຊັບໃນອາຊີ ປະກອບກັບການທີ່ ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ສປ. ຈີນ ໄດ້ປະກາດໃຊ້ມາດຕະການຄວບຄຸມການລົງທຶນທີ່ແນໃສ່ເກັງກຳໄລໃນຮຸ້ນກຸ່ມປະກັນໄພ ເນື່ອງຈາກ ອຸດສາຫະກຳປະກັນໄພແມ່ນມີຄວາມສຳຄັນຕໍ່ກັບການສ້າງສະຖຽນລະພາບທາງການເງິນ ແລະ ການກະຕຸ້ນເສດຖະກິດຂອງປະເທດ ເຮັດໃຫ້ຜູ້ລົງທຶນເລີ່ມເຄື່ອນໄຫວຊື້-ຂາຍຢ່າງລະມັດລະວັງໃນອາທິດນີ້ ເນື່ອງຈາກເກີດກະແສຂ່າວການເກັງກຳໄລໃນຕະຫຼາດຫຼັກຊັບ ຂອງບັນດາບໍລິສັດປະກັນໄພ ຈາກບັນດາປັດໃຈດັ່ງທີ່ກ່າວມານີ້ ສົ່ງຜົນໃຫ້ດັດຊະນີຕະຫຼາດຫຼັກຊັບໃນອາຊີ ສ່ວນໃຫຍ່ປັບຕົວຫຼຸດລົງ ເຖິງແມ່ນວ່າ ທະນາຄານກາງຍີ່ປຸ່ນ ຈະປະກາດແຜນການກະຕຸ້ນເສດຖະກິດ ແລະ ທະນາຄານໂລກ ຈະອອກມາປະເມີນວ່າ ເສດຖະກິດຂອງປະເທດ ມາເລເຊຍ ຍັງຄົງສາມາດຂະຫຍາຍຕົວຕໍ່ໄປໄດ້ໃນພາວະຄວາມບໍ່ແນ່ນອນຈາກປັດໃຈກົດດັນຈາກພາຍນອກ ກໍ່ຕາມ.

2. <u>**ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ**</u>

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ປິດຢູ່ທີ່ 1.012,72 ຈຸດ ຫຼຸດລົງ 1,84% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດມີປະລິມານຊື້-ຂາຍຮຸ້ນທັງໝົດ 95.900 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 478,5 ລ້ານກີບ ເພີ່ມຂຶ້ນ 29,32% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 54,89% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.046 ກີບ ເພີ່ມຂຶ້ນ 16 ກີບ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 8.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 40,37 ລ້ານກີບ ຫຼຸດລົງ 84,39% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດ ກວມເອົາ 48,89% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,41%[1].

ຮຸ້ນຂອງບໍລິສັດຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 4.993 ກີບ ຫຼຸດລົງ 2 ກີບ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 87.600 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 437,38 ລ້ານກີບ ເພີ່ມຂຶ້ນ 342,42% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດ ກວມເອົາ 61,08% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,38%[2].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາປິດ 5.900 ກີບ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ. ໂດຍອາທິດນີ້ຮຸ້ນ LWPC ບໍ່ສາມາດຈັບຄູ່ຊື້-ຂາຍກັນໄດ້. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,79%[3].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ (PTL) ມີລາຄາປິດ 2.500 ກີບ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານການຊື້-ຂາຍທັງໝົດ 300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,75 ລ້ານກີບ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນພາຍໃນປະເທດທັງໝົດ ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນ 12,66%[4].

ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາປິດ 3.000 ກີບ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ. ໂດຍອາທິດນີ້ຮຸ້ນ SVN ບໍ່ສາມາດຈັບຄູ່ຊື້-ຂາຍກັນໄດ້. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,20%[5].

**ຫົວໜ້າພະແນກຄຸ້ມຄອງຕະຫຼາດຫຼັກຊັບ**

---

ລາຄາສະເລຍແມ່ນລາຄາທີ່ສະເລຍຊື້-ຂາຍຕໍ່ຮຸ້ນພາຍໃນອາທິດນັ້ນ;

[1]ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%, 1% ສຳລັບຜູ່ລົງທຶນປະເພດບຸກຄົນ ແລະ 1% ສາລັບຜູ່ລົງທຶນປະເພດສະຖາບັນ;

[2]ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%, 1% ສຳລັບຜູ່ລົງທຶນປະເພດບຸກຄົນ ແລະ 5% ສາລັບຜູ່ລົງທຶນປະເພດສະຖາບັນ;

[3]ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[4]ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[5]ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.



ທ. ບຸນຈິງ ກອງຄຳ

## ຕາຕະລາງ 1: ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລຍ | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາສະເລຍ (ກີບ) |
| BCEL | 51.400 | 258.620.000 | 5.032 | 8.000 | 40.370.000 | 5.046 | -84,44 | -84,39 | 15 |
| EDL-GEN | 19.800 | 98.900.000 | 4.995 | 87.600 | 437.385.000 | 4.993 | 342,42 | 342,25 | -2 |
| LWPC | 0 | 0 | 5.900 | 0 | 0 | 5.900 | - | - | - |
| PTL | 5.000 | 12.500.000 | 2.500 | 300 | 750.000 | 2.500 | -94,00 | -94,00 | - |
| SVN | 0 | 0 | 3.000 | 0 | 0 | 3.000 | - | - | - |
| ທັງໝົດ | 76.200 | 370.020.000 | 0 | **95.900** | **478.505.000** | | 25,85 | 29,32 | |

## ແຜນວາດ 1: ດັດຊະນີຕະຫຼາດຫຼັກຊັບລາວ

## (11 ມັງກອນ 2011 – 22 ທັນວາ 2016)




## ແຜນວາດ 2: ມູນຄ່າການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ

## ( 9 - 22 ທັນວາ 2016)

ຫົວໜ່ວຍ: ລ້ານ ກີບ




## ຕາຕະລາງ 2: ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດ

| ຊື່ດັດຊະນີ | ປະເທດ | ດັດຊະນີໃນອາທິດນີ້ | ດັດຊະນີໃນອາທິດກ່ອນ | ປ່ຽນແປງ | |
|---|---|---|---|---|---|
| | | | | +/- | % |
| I. ສະຫະລັດ | | | | | |
| DOW | ສ.ອາເມລິກາ | 19,941.96 | 19,792.53 | 149.43 | 0.75 |
| NASDAQ | ສ.ອາເມລິກາ | 5,471.43 | 5,436.67 | 34.76 | 0.64 |
| S&P500 | ສ.ອາເມລິກາ | 2,265.18 | 2,253.28 | 11.90 | 0.53 |
| II. ຕະຫຼາດຫຼັກຊັບເອີຣົບ | | | | | |
| Eurofirst 300 | ເອີຣົບ | 1,426.37 | 1,406.67 | 19.70 | 1.40 |
| DAX | ເຢຍລະມັນ | 11,468.64 | 11,244.84 | 223.80 | 1.99 |
| FTSE100 | ອັງກິດ | 7,041.42 | 6,949.19 | 92.23 | 1.33 |
| CAC40 | ຝຣັ່ງ | 4,833.82 | 4,769.24 | 64.58 | 1.35 |
| LUXXX | ລຸກຊຳບວກ | 1,685.82 | 1,700.67 | (14.85) | (0.87) |
| III. ຕະຫຼາດຫຼັກຊັບອາຊີ | | | | | |
| NIKKEI225 | ຍີ່ປຸ່ນ | 19,444.49 | 19,253.61 | 190.88 | 0.99 |
| KOSPI | ສ.ເກົາຫຼີ | 2,037.96 | 2,036.87 | 1.09 | 0.05 |
| HANGSHENG | ຮ່ອງກົງ | 21,809.80 | 22,456.62 | (646.82) | (2.88) |
| TWSE | ໄຕ້ຫວັນ | 9,204.26 | 9,368.52 | (164.26) | (1.75) |
| SHANGHAI | ສປ. ຈີນ | 3,137.43 | 3,140.53 | (3.10) | (0.10) |
| SHENZHEN | ສປ. ຈີນ | 1,996.03 | 1,959.86 | 36.17 | 1.85 |
| S&P/ASX200 | ອົດສະຕາລີ | 5,613.50 | 5,584.60 | 28.90 | 0.52 |
| IV. ຕະຫຼາດຫຼັກຊັບອາຊຽນ | | | | | |
| ASEAN40 | ອາຊີ | 8,734.07 | 8,982.25 | (248.18) | (2.76) |
| STRAIT TIME | ສິງກະໂປ | 2,901.70 | 2,954.06 | (52.36) | (1.77) |
| SET | ໄທ | 1,508.57 | 1,521.25 | (12.68) | (0.83) |
| FBMLCI | ມາເລເຊຍ | 1,629.59 | 1,643.29 | (13.70) | (0.83) |
| JCI | ອິນໂດເນເຊຍ | 5,111.39 | 5,262.82 | (151.43) | (2.88) |
| PCOMP | ຟີລິບປິນ | 6,686.36 | 6,928.34 | (241.98) | (3.49) |
| HOCHIMIN | ສສ. ຫວຽດນາມ | 666.94 | 665.14 | 1.80 | 0.27 |
| HANOI | ສສ. ຫວຽດນາມ | 80.25 | 78.57 | 1.68 | 2.14 |
| CSX | ກຳປູເຈຍ | 330.19 | 313.54 | 16.65 | 5.31 |
| LSX | ສປປ. ລາວ | 1,005.20 | 1,004.54 | 0.66 | 0.07 |
| MYANPIX | ມຽນມ້າ | 620.87 | 623.67 | (2.80) | (0.45) |
| V. ດັດຊະນີກຸ່ມທະນາຄານ | | | | | |
| NASDAQ BANK | ສ. ອາເມລິກາ | 3,869.99 | 3,777.77 | 92.22 | 2.44 |
| SET BANK | ໄທ | 482.88 | 482.48 | 0.40 | 0.08 |